**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 13 /ນຍ.

**ດຳລັດ**

**ວ່າດ້ວຍການຍຸບເລີກຄະນະຊີ້ນຳ**

**ໂຄງການຜະລິດສິນຄ້າ ຂັ້ນສູນກາງ**

-ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ( ສະບັບປັບປຸງໃໝ່ ) ສະບັບເລກ 02/ສພຊ, ລົງວັນທີ 6 ພຶດສະພາ 2003.

-ອີງຕາມ ດຳລັດ " ກ່ຽວກັບການແຕ່ງຕັ້ງຄະນະຊີ້ນຳໂຄງການຜະລິດສິນຄ້າ ຂັ້ນສູນກາງ " ສະບັບເລກທີ 241 /ນຍ, ລົງວັນທີ 25 ທັນວາ 2001 ຂອງນາຍົກລັດຖະມົນຕີ.

**ນາຍົກລັດຖະມົນຕີ ອອກດຳລັດ:**

ມາດຕາ1. ຍຸບເລີກຄະນະຊີ້ນຳໂຄງການຜະລິດສິນຄ້າ ຂັ້ນສູນກາງ, ແຕ່ໃຫ້ຮັກສາກອງເລຂາຂອງຄະນະດັ່ງກ່າວໄວ້ຊົ່ວຄາວຈົນກວ່າການດຳເນີນໂຄງການທີ່ໄດ້ອະນຸມັດໄປແລ້ວ ຊຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ສືບຕໍ່ໃຫ້ສຳເລັດລົງ.

ມາດຕາ2. ໃຫ້ທ່ານຮອງນາຍົກລັດຖະມົນຕີ ທອງລຸນ ສີສຸລິດ ເປັນຜູ້ຊີ້ນຳກອງເລຂາຊົ່ວຄາວດັ່ງກ່າວຈົນໂຄງການສຳເລັດ.

ມາດຕາ3. ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ຜູ້ທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ4. ດຳລັດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ.໒໗.໐໑.໒໐໐໔

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.**

ບຸນຍັງ ວໍລະຈິດ